# L’Osem-3

**Generic Name:** Semaglutide
**Brand Name:** L’Osem-3
**Composition:**
Semaglutide.......................................................3mg
**Indications:**

- L’Osem-3 is a glucagon-like peptide-1 (GLP-1) receptor agonist indicated as an adjunct to diet and exercise to improve glycemic control in adults with type 2 diabetes mellitus.

**Dosage:**

- Instruct patients to take L’Osem-3 at least 30 minutes before the first food, beverage, or other oral medications of the day with no more than 100 ml of plain water only. Waiting less than 30 minutes, or taking with food, beverages (other than plain water) or other oral medications will lessen the effect of L’Osem-3. Waiting more than 30 minutes to eat may increase the absorption of L’Osem-3.
- Swallow tablets whole. Do not split, crush, or chew tablets.
- Start treatment with L'Osem with the 3 mg dosage once daily for 30 days. After 30 days on the 3 mg dosage, increase the dosage to 7 mg once daily.
- Dosage may be increased to 14 mg once daily if additional glycemic control is needed after at least 30 days on the 7 mg dosage.

**Contraindication:**

- Personal or family history of medullary thyroid carcinoma or in patients with Multiple Endocrine Neoplasia syndrome type 2.
- Prior serious hypersensitivity reaction to semaglutide or any of the excipients in L’Osem-3.

**Warning:**

- Pancreatitis: Has been reported in clinical trials. Discontinue promptly if pancreatitis is suspected. Do not restart if pancreatitis is confirmed.
- Diabetic Retinopathy Complications: Has been reported in a cardiovascular outcomes trial with semaglutide. Patients with a history of diabetic retinopathy should be monitored.
- Hypoglycemia: Concomitant use with an insulin secretagogue or insulin may increase the risk of hypoglycemia, including severe hypoglycemia. Reducing dose of insulin secretagogue or insulin may be necessary.
- Acute Kidney Injury: Monitor renal function in patients with renal impairment reporting severe adverse gastrointestinal reactions.
- Acute Gallbladder Disease: If cholelithiasis or cholecystitis are suspected, gallbladder studies are indicated.

**Adverse effects:**

- Most common adverse reactions (incidence ≥5%) are nausea, abdominal pain, diarrhea, decreased appetite, vomiting and constipation.

**Dosage form:** white to light yellow tablets.
**Expiry date:** 24 months after the date of manufacture.
**Packaging:** 10 tablets per blister, 3 blisters per box.
**Storage:**

- Protected from light, sealed in original packaging, and stored at 20℃- 25℃.
- Keep out of reach of children.

**Manufactured by:**

Laos Alliance Pharmaceutical Group Factory.
Saysettha Development Zone, Vientiane Capital, Lao PDR
Tel: +856-21-737 051
www.alliancepharmagroup.com

# ເອກະສານກຳກັບຢາ
# L’Osem-3

**ຊື່ທົ່ວໄປ:** Semaglutide
**ຊື່ຜະລິດຕະພັນ:** L’Osem-3
**ສ່ວນປະກອບ:**
Semaglutide........................................................................3mg

**ຂໍ້ບົ່ງໃຊ້:**
- L’Osem-3 ນຳໃຊ້ໃນຄົນເຈັບທີ່ເປັນພະຍາດເບົາຫວານ ຊະນິດສອງ ມີກົນໄກການອອກລິດ ດ້ວຍການກະຕຸ້ນການທຳງານຂອງ Glucagon-like peptide-1 (GLP-1) receptor ທີ່ມີບົດບາດໃນການຄວບຄຸມລະດັບນ້ຳຕານໃນເລືອດ ປະສານສົມທົບ ລະຫວ່າງ ວິທີການໃນການຮັບປະທານອາຫານ ແລະ ການອອກກຳລັງກາຍ.

**ວິທີໃຊ້:**
- ແນະນຳໃຫ້ຄົນເຈັບຮັບປະທານ L’Osem-3 ຢ່າງຫນ້ອຍ 30 ນາທີກ່ອນການຮັບປະທານອາຫານ ຫຼື ເຄື່ອງດື່ມຕ່າງໆ. ສຳລັບການກິນຢາ ປະລິມານນ້ຳທີ່ໃຊ້ໃນການກືນຢາ ບໍ່ຄວນເກີນ 100ml, ລວມທັງການກິນອາຫານ ແລະ ເຄື່ອງດື່ມ(ນອກຈາກນນ້ຳລ້າ) ກໍຕ້ອງຫຼັງການກິນຢາ 30 ນາທີ ເປັນຢ່າງຕ່ຳ ເພື່ອໃຫ້ ປະສິດທິພາບ ໃນການດູດຊຶມຂອງ L’Osem-3 ເຂົ້າສູ່ກະແສເລືອດດີຂຶ້ນ, ການລໍຖ້າຮັບປະທານອາຫານຫຼາຍກ່ວາ 30 ນາທີຂື້ນໄປອາດເພີ່ມການດູດຊຶມຂອງ L’Osem-3.
- ໃຫ້ກືນກິນ ທັງເມັດ ບໍ່ຄວນບົດຄຽວ ຫຼື ຫຍ້ຳຢາ ເພາະຈະພາໃຫ້ ປະລິມານຢາຖືກທຳລາຍຈາກກົດໃນກະເພາະເພີ່ມຂຶ້ນ ເຮັດໃຫ້ຢາບໍ່ມີປະສິດທິຜົນດີ.
- ເລີ່ມການປິ່ນປົວດ້ວຍ L'Osem ດ້ວຍປະລິມານ 3mg ຕໍ່ຄັ້ງ ຕໍ່ວັນເປັນເວລາ 30 ວັນ. ຫຼັງຈາກຮັບປະທານປະລິມານ 3mg ເປັນເວລາ 30 ວັນແລ້ວໃຫ້ເພີ່ມປະລິມານເປັນ 7mg ຕໍ່ຄັ້ງ ຕໍ່ວັນ.
- ອາດສາມາດເພີ່ມປະລິມານ ຢາເປັນ 14 mg ຕໍ່ຄັ້ງ ຕໍ່ວັນ ກິນຕິດຕໍ່ກັນເປັນເວລາ ຢ່າງໜ້ອຍ 30 ວັນ, ຈາກນັ້ນ ຈຶ່ງປັບຂະໜາດຢາ ມາເປັນ 7 mg ຕໍ່ວັນ.

**ຂໍ້ຫ້າມໃຊ້:**
- ຫ້າມໃຊ້ໃນຄົນເຈັບທີ່ມີບັນຫາກ່ຽວກັບ ມະເຮັງຕ່ອມໄທລອຍ, ໃນຄົນເຈັບທີ່ມີອາການຕ່າງໆ ກ່ຽວກັບເນື້ອງອກຂອງຕ່ອມໄທລອຍ.
- ບໍ່ຄວນໃຊ້ຢານີ້ ໃນຄົນເຈັບທີ່ແພ້ຕໍ່ຢາ ຫຼື ມີອາການແພ້ຕໍ່ສ່ວນປະກອບຕ່າງໆໃນຕົວຢາ L’Osem-3.

**ຄຳເຕືອນ:**
- ເກີດອາການກ່ຽວກັບ Pancreatitis (ຕັບອ່ອນອັກເສບ): ກໍລະນີພົບເຫັນອາການ ຫຼື ສົງໃສ ຄວນຢຸດການນຳໃຊ້ທັນທີ, ບໍ່ຄວນນຳໃຊ້ຄືນ ຈົນກວ່າຈະຢືນຢັນວ່າ ບໍ່ມີບັນຫາກ່ຽວກັບ Pancreatitis.
- ໃນຄົນທີ່ເປັນເບົາຫວານທີ່ມີອາການສົນຕໍ່ກັບປະສາດຕາ: ສາມາດເຮັດໃຫ້ເກີດບັນຫາຕໍ່ລະບົບຫົວໃຈເສັ້ນເລືອດໄດ້ ຄວນກວດກາ ແລະ ຢືນຢັນກ່ອນການນຳໃຊ້ semaglutide. ຄົນເຈັບທີ່ເຄີຍເປັນພະຍາດເບົາຫວານທີ່ມີອາການສົນຕໍ່ກັບປະສາດຕາຄວນຕ້ອງຮັບການຕິດຕາມ.
- ການເກີດພາວະນ້ຳຕານຕ່ຳ (Hypoglycemia): ການໃຊ້ຢາຕິດຕໍ່ກັນເປັນເວລານານ ຫຼື ໃຊ້ຢາຮ່ວມກັບ ຢາຄວບຄຸມ ລະດັບນ້ຳຕານຊະນິດອື່ນ ສາມາດເຮັດໃຫ້ປະລິມານນ້ຳຕານ ໃນເລືອດຕົກກວ່າເກນປົກກະຕິໄດ້, ດັ່ງນັ້ນ ຖ້າກວດພົບເຫັນອາການ ຄວນປັບປະລິມານການນຳໃຊ້ຢາລົງ.
- ຄົນເຈັບທີ່ມີບັນຫາກ່ຽວກັບການທຳງານຂອງໝາກໄຂ່ຫຼັງ: ກ່ອນການນຳໃຊ້ຄວນກວດເຊັກ ສະພາບການທຳງານຂອງໝາກໄຂ່ຫຼັງ, ໃນສະພາບໝາກໄຂ່ຫຼັງຊຸດໂຊມ ການໃຊ້ຢາ ທີ່ສາມາດ ພາໃຫ້ເກີດບັນຫາ ຕໍ່ກະເພາະລຳໄສ້ໄດ້.
- ໃນຄົນເຈັບທີ່ມີບັນຫາກ່ຽວກັບການທຳງານຂອງຖົງນ້ຳບີ: ຖ້າພົບເຫັນອາການຖົງນ້ຳບີອັກເສບ ຫຼື ສົງໃສ ຄວນກວດໃຫ້ແນ່ໃຈ ແລະຢຸດຕິການນຳໃຊ້.

**ຜົນຂ້າງຄຽງ:**
- ຜົນຂ້າງຄຽງສ່ວນໃຫຍ່ທີ່ພົບ ປະກອບມີ ອາການປັ້ນທ້ອງ, ປວດທ້ອງ, ຖອກທ້ອງ, ບໍ່ຢາກອາຫານ, ຮາກ, ທ້ອງຜູກ.

**ຮູບແບບຂອງຢາ:** ເປັນເມັດສີຂາວຫາສີເຫຼືອງອ່ອນ.
**ວັນໝົດອາຍຸ:** 24 ເດືອນ ນັບຈາກວັນທີຜະລິດ.
**ຂະໜາດບັນຈຸ:** ບັນຈຸໃນກັບ, 1 ກັບມີ 3 ແຜງ, 1 ແຜງມີ 10 ເມັດ.
**ການເກັບຮັກສາ:**
- ເກັບຮັກສາໄວ້ໃນກັບກ່ອງ ບັນຈຸເດີມ, ບໍ່ໃຫ້ຖືກແສງແດດ ເກັບໄວ້ໃນຫ້ອງທີ່ມີ ອຸນຫະພູມ ລະຫວ່າງ 20°C-25°C.
- ເກັບຮັກສາ ຢາໃຫ້ຫ່າງໄກຈາກມືເດັກ.

**ຜະລິດໂດຍ:**

ໂຮງງານຜະລິດຢາ ລາວພັນທະມິດ ຟາກມາ ກຣຸບ ຈຳກັດ
ສະຖານທີ່: ຕັ້ງຢູ່ເຂດ ພັດທະນາກວມລວມ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ: +856-21-737 051
www.alliancepharmagroup.com